ສາລະວັນ ເລ່ງເປົ້າປູກພືດ ເປັນສິນຄ້າມີຕະຫລາດຮອງຮັບ
ສາລະວັນເປັນແຂວງຫນຶ່ງ ທີ່ມີເນື້ອທີ່ໃນການຜະລິດກະສິກຳ
ຢ່າງກວ້າງຂວາງ, ຂະນະທີ່ຂະແຫນງກະສິກຳ ແລະ
ປ່າໄມ້ແຂວງເລ່ງເປົ້າສົ່ງເສີມການປູກພືດທີ່ມີທ່າແຮງ
ເພື່ອການບໍລິໂພກ ແລະ ຂາຍເປັນສິນຄ້າ. ຂໍ້ມູນຈາກພະແນກແຜນການ ແລະ
ການລົງທຶນແຂວງສາລະວັນໃຫ້ຮູ້ວ່າ: ໂດຍລວມແລ້ວ ແຂວງສາລະວັນແມ່ນມີ
ທ່າແຮງໃນການຜະລິດກະສິກຳ

ໂດຍສະເພາະການຜະລິດສະບຽງອາຫານ ແລະ
ປູກພືດເປັນສິນຄ້າແມ່ນມີການແຂ່ງຂັນກັນເຮັດເປັນຂະບວນຢ່າງຕໍ່
ເນື່ອງ, ເປັນຕົ້ນພືດທີ່ມີຕະຫລາດຮອງຮັບເຊັ່ນ: ກາເຟປອດສານພິດ,
ສາລີອາຫານສັດ, ມັນຕົ້ນ, ພືດຕະກູນຖົ່ວ, ສັດລ້ຽງ... ເຫັນວ່າໄດ້ຮັບຜົນດີ.

ພືດໄລຍະສັ້ນຮອບວຽນປີຫນຶ່ງປູກໄດ້ຫລາຍເທື່ອເຊັ່ນ: ສາລີ, ສາລອຍ,
ຫມາກແຕງ, ຫມາກຖົ່ວ, ພືດຜັກຕ່າງໆ
ເຊິ່ງໃນສົກປີຜ່ານມາສາມາດເກັບຜົນຜະລິດສາລີ, ສາລອຍໄດ້ເກືອບ 8
ພັນໂຕນ, ໃນເນື້ອທີ່ 1.245 ເຮັກຕາ, ຫມາກເຜັດ, ຫມາກເຂືອໄດ້ເກືອບ 3 ພັນໂຕນ,
ຫມາກແຕງ, ຫມາກອຶໄດ້ 7.500 ໂຕນ, ພືດຜັກຕ່າງໆໄດ້ 10.214 ໂຕນ, ການຜະລິດຊີ້ນໄດ້
13.746 ໂຕນ ແລະ ປາໄດ້ 972 ໂຕນ.

ສ່ວນການຜະລິດເປັນສິນຄ້າແມ່ນສຸມໃສ່ພືດທີ່ເປັນທ່າແຮງ,
ມີຕະຫລາດຮອງຮັບເປັນຕົ້ນກາເຟຄຸນນະພາບ, ສາລີຫົວອາຫານສັດ, ເຂົ້າ,
ມັນຕົ້ນ, ມັນດ້າງ, ຫມາກກ້ວຍ,
ເຊິ່ງໃນສົກປີຜ່ານມາສາມາດເກັບຜົນຜະລິດກາເຟໄດ້ 17.220 ໂຕນ,
ເຂົ້າເປັນສິນຄ້າ 1,3 ແສນໂຕນ, ສາລີຫົວອາຫານສັດ 12.576 ໂຕນ, ມັນດ້າງ 3.317 ໂຕນ,
ມັນຕົ້ນ 85.818 ໂຕນ ແລະ ກ້ວຍ 80.933 ໂຕນ,
ເຮັດໃຫ້ຕົວເລກການສົ່ງອອກສິນຄ້າກະສິກຳປະເພດພືດແມ່ນບັນລຸ 6,62
ລ້ານໂດລາສະຫະລັດ, ທຽບກັບປີຜ່ານມາເພີ່ມຂຶ້ນ 2 ເທົ່າຕົວ. ນອກຈາກນີ້
ແມ່ນສົ່ງອອກປະເພດງົວ, ຄວາຍ, ຫມູຄິດເປັນມູນ ຄ່າ 269.298 ໂດລາສະຫະລັດ ແລະ
ເຄື່ອງປ່າຂອງດົງປະມານ 1 ລ້ານກວ່າໂດລາສະຫະລັດ.
 1 / 2

ສາລະວັນ ເລ່ງເປົ້າປູກພືດ ເປັນສິນຄ້າມີຕະຫລາດຮອງຮັບ

ສ່ວນຂະແຫນງອຸດສາຫະກຳ ແລະ ການຄ້າແຂວງເຫັນວ່າມີທ່ວງທ່າດີຂຶ້ນ,
ເນື່ອງຈາກວ່າລັດຖະບານມີນະໂຍບາຍການສົ່ງອອກໄມ້ ແລະ ຜະລິດຕະພັນໄມ້,
ສິນຄ້າກະສິກຳ, ບັນລຸ 166,45 ຕື້ກີບ, ກວມເອົາ 74% ຂອງການສົ່ງອອກທັງຫມົດ,
ທຽບກັບສົກປີກ່ອນຫນ້ານັ້ນເພີ່ມຂຶ້ນ 41,88%, ແນວໃດກໍ່ຕາມ
ຄຽງຄູ່ກັບການຜະລິດກໍ່ໄດ້ເອົາໃຈໃສ່ການກວດກາຄຸ້ມຄອງ,
ຈັດສັນຄວາມເປັນລະບຽບຮຽບຮ້ອຍ, ຄຸ້ມຄອງລາຄາສິນຄ້າ,
ອັນທີ່ພົ້ນເດັ່ນໄດ້ລະດົມທຸລະກິດມາລົງທຶນເຂົ້າໃນການ
ພັດທະນາຕະຫລາດເມືອງຄົງເຊໂດນ, ເມືອງວາປີ...
ເພື່ອສ້າງສິ່ງຮອງຮັບກັບຜົນຜະລິດຂອງຊາວກະສິກອນ, ທຸລະກິດ...
ໃຫ້ໄດ້ສະດວກ ແລະ ຫມັ້ນທ່ຽງຕໍ່ເນື່ອງ.

ທີ່ມາຂອງຂ່າວ:
 2 / 2